# ເວທີສົນທະນາ: ການຍົກລະດັບການບໍລິການທາງດ້ານໂພຊະນາການ- ຄວນພິຈາລະນາບັນຫາຫຍັງແດ່?
# ທ່າອຽງລະດັບສາກົນ ແລະ ປະສົບການຈາກລະດັບພາກພື້ນ

ກອງປະຊຸມສຸດຍອດຊັບສິນມະນຸດ 2024

ຕັ້ງວັນທີ 26 ມິຖຸນາ 2024 |ນະຄອນຫລວງວຽງຈັນ

ສປປ ລາວ
ກອງປະຊຸມສຸດຍອດ
ຊັບສິນດ້ານມະນຸດ ຄັ້ງທີ II
ໂພຊະນາການທີ່ດີແມ່ນສັບສິນດ້ານມະນຸດ

LAO PDR
2ND HUMAN CAPITAL SUMMIT
NUTRITION - THE FOUNDATION OF HUMAN CAPITAL



ທ່ານ ນາງ ກຽວໂກະ ຊິບະຕະ ໂອກາມູຣະ (Kyoko Shibata Okamura ຜູ້ຊ່ຽວຊານອາວຸໂສ ດ້ານໂພຊະນາການ, ທະນາຄານໂລກ

- ທ່ານ ນາງ ກຽວໂກະ ຊິບະຕະ ໂອກາມູຣະ (**Kyoko Shibata Okamura**) ແມ່ນຜູ້ຊ່ຽວຊານອາວຸໂສ ດ້ານໂພຊະນາການຈາກທີມງານດ້ານສຸຂະພາບ ໂພຊະນາການ ແລະ ພົນລະເມືອງ ຈາກທະນາຄານໂລກ. ທ່ານເປັນຜູ້ມີປະສົບການດ້ານການຄົ້ນຄວ້າວິໃຈ ນະໂຍບາຍດ້ານສຸຂະພາບ, ການລົ້ນແຜນງົບປະມານ ດ້ານໂພຊະນາການ, ການຄິດຕາມ, ການວິເຄາະ ອາຫານສົ່ງເສີມສຸຂະພາບ ແລະ ລະບົບອາຫານ, ແລະ ການບໍລິຫານໂຄງການໂພຊະນາການແບບຫລາຍ ຂະແຫນງການຫລາຍກວ່າ 20 ປີ.
- ທ່ານເປັນໂຕແທນຂອງທະນາຄານໂລກໃນຂະບວນການ ການສ້າງບົດລາຍງານໂພຊະນາການລະດັບສາກົນ ແລະ ເປັນສ່ວນຫນຶ່ງຂອງທີມງານໂພຊະນາການສາກົນອື່ນໆອີກ.
- ທ່ານໄດ້ຮັບປະຍິນຍາສາຂາໂພຊະນາການຂອງມະນຸດ ຈາກສະຖາບັນສາທາລະນະສຸກສາດ ມະຫາໄລ **Johns Hopkins Bloomberg**



ດຣ. ໂຣແລນດ ຄູບກາ (Dr. Roland Kupka), ຜູ້ໃຫ້ຄຳປຶກສາດ້ານ ໂພຊະນາການ, ຢູນິເຊບ

- ດຣ ໂຣແລນ ຄູບກາ, ຜູ້ໃຫ້ຄຳປຶກສາດ້ານໂພຊະນາການລະດັບພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ ທີ່ຄອບຄຸມ 14 ປະເທດ.
- ດຣ ໂຣແລນ ຄູບກາ ມີປະສົບການເຮັດວຽກຢູ່ຫ້ອງການໃຫຍ່ຂອງອົງການຢູນິເຊບ, ຫ້ອງການພາກພື້ນຂອງພາກຕາເວັນຕົກ ແລະ ພາກກາງຂອງທະວີບອັບຟິກາ, ເຄີຍປະຈຳຢູ່ ສະຖາບັນສາທາລະນະສຸກສາດ ມະຫາໄລ Harvard . ທ່ານເຄີຍເຮັດວຽກໃນຕຳແຫນ່ງລະດັບຜູ້ບໍລິຫານຈາກຫລາຍອົງການຈັດຕັ້ງ, ລວມທັງເປັນສະມາຊິກຂອງຄະນະພິຈາລະນາບັນຫາກ່ຽວກັບຈຸລະສານອາຫານ, ເປັນສະມາຊິກຄະນະບໍລິຫານເຄືອຄ່າຍສາກົນດ້ານເກືອໄອໂອດິນ, ແລະ ທັງເຄີຍເປັນຄະນະບໍລິຫານໂຄງການລິເລີ່ມດ້ານການເສີມຈຸລະສານອາຫານ.
- ໃນ 20 ປີຜ່ານມາ, ວຽກງານຂອງ ດຣ ໂຣແລນ ໄດ້ເນັ້ນໃສ່ການສຶກສາບົດຫມາຍຄວາມສັບສົນຂອງໂພຊະນາການຕໍ່ກັບສຸຂະພາບແມ່ ແລະ ເດັກນ້ອຍ ແລະ ໄດ້ແນະນຳຫລາຍມາດຕະການແກ້ໄຂ. ທ່ານໄດ້ບັນທຶກປະສົບການເຫລົ່ານີ້ຜ່ານການເຜີຍແຜ່ວາລະສານ ຫລາຍກວ່າ 75 ສະບັບ.
- ດຣ ຄູບກາ ສຳເລັດປະລິນຍາເອກສາຂາໂພຊະນາການ ແລະ ການລະບາດຈາກມະຫາໄລຮາເວີດ (Harvard University).



ຕູຕິ ສຸກາດິ (Tuti Sukardi), ຮອງຜູ້ຊ່ວຍດ້ານການພັດທະນາມະນຸດ ຂອງກອງເລຂາຮອງປະທານປະເທດຂອງອິນໂດເນເຊຍ

- ຕູຕິ ຕຣິຮາຕຸຕິ ສຸກາດິ (**Tuti Trihastuti Sukardi**) ເປັນຜູ້ຊ່ວຍທາງດ້ານການພັດທະນາມະນຸດ ຂອງກອງເລຂາສໍາລັບສະຫນັບສະຫນູນດ້ານນະໂຍບາຍການພັດທະນາມະນຸດ ແລະ ຄວາມເທົ່າທຽມປະຈໍາຫ້ອງການຮອງປະທານປະເທດ. ທ່ານມີປະສົບການຫລາຍກວ່າ **25** ປີໃນຂົງເຂດການໂພຊະນາການ.
- ໃນບົດບາດປະຈຸບັນຂອງທ່ານແມ່ນໄດ້ເບິ່ງ ບັນຫາດ້ານການພັດທະນາຊັບພະຍາກອນມະນຸດ, ລວມທັງພັດທະນາໄວຫນຸ່ມ, ກິລາ, ສາດສະຫນາ ແລະ ສາທາລະນະສຸກສາດ. ແຕ່ເດືອນມັງກອນຜ່ານມາ ມ່ານໄດ້ຮ່ວມບໍລິຫານ ໂຄງການປັບປຸງການຂາດສານອາຫານແບບຊໍາເຮື້ອ ແລະ ປະສານງານວຽກງານເພື່ອປະເມີນໂພຊະນາການສໍາລັບເດັກໄລຍະ **II.**
- ກ່ອນຫນ້ານີ້, ທ່ານໄດ້ເຮັດຫນ້າທີ່ເປັນຜູ້ຊ່ວຍຜູ້ອໍານວຍການດ້ານກົດຫມາຍ ຢູ່ກອງເລຂາຂອງກະຊວງ ເຊິ່ງໃນນີ້ແມ່ນລາວຮັບຜິດຊອບຫລາຍວຽກງານ. ທ່ານຍັງໄດ້ເປັນທີ່ຮູ້ຈັກໃນການເປັນໂຄສົກ ແລະ ຜູ້ແນະນໍາດ້ານກົດຫມາຍແຫ່ງຊາດ ແລະ ລະດັບພາກພື້ນ.
- ທ່ານໄດ້ສໍາເລັດການສຶກສາປະລິນຍາຕີດ້ານກົດຫມາຍ ຈາກມະຫາໄລອັນດາລາສ, ຢູ່ທາງຕາເວັນຕົກຂອງເກາະສຸມາດຕຣາ ແລະ ໄດ້ຈົບລະດັບປະລິນຍາໂທດ້ານກົດຫມາຍ ຈາກມະຫາໄລແຫ່ງຊາດຂອງອິນໂດເນເຊຍ.



ດຣ. ຕຣວງ ຕູເຢດ ໄມ (Truong Tuyet Mai), ຮອງຜູ້ອໍານວຍການສະຖາບັນໂພຊະນາການແຫ່ງຊາດ, ກະຊວງສາທາ, ສສ ຫວຽດນາມ

- ດຣ. ຕຣວງ ຕູເຢດ ໄມ, ທັງເປັນຮອງຜູ້ອໍານວຍການສະຖາບັນ ແລະ ເປັນຮອງສາສະດາຈານຂອງສະຖາບັນໂພຊະນາການ, ກະຊວງສາທາລະນະສຸກ ຈາກ ສສ ຫວຽດນາມ, ນອກນີ້ຍັງເປັນສາດສະດາຈານກຽດຕິມະສັກ ໂຮງຮຽນການຢາຮາຍພອງ, ໂຮງຮຽນການຢາ ຮາໂນ້ຍ, ສສ ຫວຽດນາມ.
- ທ່ານເປັນບຸກຄົນສໍາຄັນໃນການເປັນຜູ້ໃຫ້ຄໍາປືກສາໃນການພັດທະນານະໂຍບາຍດ້ານໂພຊະນາການ, ການລັດຕັ້ງປະຕິບັດ, ການຕິດຕາມປະເມີນຜົນຂອງຫລາຍແຜນງານດ້ານໂພຊະນາການ ລວມທັງແຜນຍຸທະສາດແຫ່ງຊາດດ້ານໂພຊະນາການ, ແລະ ແຜນການລັດຕັ້ງປະຕິບັດງານດ້ານລະບົບອາຫານນໍາອີກ.
- ດຣ ໄມ ເປັນປະທານຮ່ວມໃນຫນ່ວຍງານວິຊາການກ່ຽວກັບໂພຊະນາການແລະ ທັງເປັນຄະນະຂອງນະໂຍບາຍແຫ່ງຊາດດ້ານໂພຊະນາການ, ນອກນີ້ທ່ານຍັງເປັນສະມາຊິກຂອງສະມາຄົມ ໂພຊະນາການແຫ່ງຊາດ, ສະມາຄົມລະບົບອາຫານ ແລະ ສະມາຄົມການຢາຂອງ ສສ ຫວຽດນາມ.
- ທ່ານໄດ້ເຮັດຫລາຍການສຶກສາ ແລະ ໄດ້ເຜີຍແຜ່ຫລາຍວາລະສານທີ່ສໍາຄັນ ໃນລະດັບສາກົນ. ທ່ານຍັງເປັນຄະນະບັນນາທິການສໍາລັບວາລະສານແຫ່ງຊາດ ດ້ານການຢາ ແລະ ວາລະສານດ້ານໂພຊະນາການຂອງ ສສ ຫວຽດນາມ.
- ດຣ ໄມ ສໍາເລັດການສຶກສາລະດັບປະລິນຍາເອກດ້ານໂພຊະນາການຈາກມະຫາໄລ ໂຕກຽວ, ຍີ່ປຸ່ນ.

# ເວທີສົນທະນາ: ການຍົກລະດັບການບໍລິການທາງດ້ານໂພຊະນາການ- ຄວນພິຈາລະນາບັນຫາຫຍັງແດ່?
# ທ່າອຽງລະດັບສາກົນ ແລະ ປະສົບການຈາກລະດັບພາກພື້ນ

ກອງປະຊຸມສຸດຍອດຊັບສິນມະນຸດ 2024

ຄັງວັນທີ 26 ມິຖຸນາ 2024 |ນະຄອນຫລວງວຽງຈັນ

ສປປ ລາວ
ກອງປະຊຸມສຸດຍອດ
ຊັບສິນດ້ານມະນຸດ ຄັ້ງທີ II
ໂພຊະນາການທີ່ດີແມ່ນສັບສິນດ້ານມະນຸດ

LAO PDR
2ND HUMAN CAPITAL SUMMIT
NUTRITION - THE FOUNDATION OF HUMAN CAPITAL



ສາດສະດາຈານ.ປອ. ໄມພອງ ໄມໄຊ,
ຮອງປະທານມະຫາວິທະຍາໄລວິທະຍາສາດ
ສຸຂະພາບ.

- ສາດສະດາຈານ.ປອ. ໄມພອງ ໄມໄຊ ແມ່ນຮອງປະທານກຳມະການ ແລະ ເປັນສາດສະດາຈານດ້ານການປິ່ນປົວພະຍາດເຂດຮ້ອນ ແລະ ພະຍາດຕິດຕໍ່ ຢູ່ມະຫາວິທະຍາໄລ ວິທະຍາສາດສຸຂະພາບ; ທ່ານທັງເປັນອາຈານຮັບເຊີນຈາກ ມະຫາວິທະຍາໄລສາທາລະນະສຸກສາດ ປະເທດສິງກະໂປ. ລວມທັງ ທ່ານໄດ້ ເປັນສະມາຊິກສະພາ ປະຈຳສະພາແຫ່ງຊາດ ສະໄຫມທີ 9.

- ທ່ານໄດ້ລິເລີ່ມຫລາຍສະຖາບັນການສຶກສາທີ່ສຳຄັນໃນ ສປປ ລາວ, ທ່ານຍັງ ໄດ້ເປັນຜູ້ຮ່ວມກໍ່ຕັ້ງ ເຄືອຄ່າຍມະຫາໄລດ້ານສຸຂະພາບ ທີ່ທ່ານເປັນ ປະທານໃນປະຈຸບັນ, ແລະ ຍັງເປັນຜູ້ຮ່ວມກໍ່ຕັ້ງສະມາຄົມພະຍາດ ຕິດຕໍ່ໃນລາວ ແລະ ທັງເປັນປະທານນຳອີກ.

- ທ່ານຍັງໄດ້ເຮັດວຽກໃນຫລາຍຕຳແຫນ່ງທີ່ສຳຄັນໃນລະດັບນານາ ຊາດ ແລະ ພາກພື້ນ ເຊັ່ນ: ທີ່ປຶກສາໃຫ້ກັບ ສະມາຄົມ **Pan Asia Communication Disorders Association**; ປະທານເຄືອ ຄ່າຍດ້ານຊັບພະຍາກອນມະນຸດລະດັບອາຊີ ແລະ ປາຊີຟິກ ສຳລັບ ສຸຂະພາບ; ສະມາຊິກຂອງຄະນະ **SEAMEO TROPMED**; ທີ່ປຶກສາ ໂຄງການນະວັດຕະກຳດ້ານສຸຂະພາບ (**Mekong One Health Innovation Program**); ແລະ ເປັນສະມາຊິກຂອງຄະນະ ບໍລິຫານງານຮ່ວມມະຫາໄລດ້ານການວິໃຈ ມະຫາໄລມະຫິດົນ-ອອັກສຟອດ ແລະ ລາວ.

- ທ່ານ ເປັນຜູ້ມີຊື່ສຽງທາງດ້ານການເຮັດຄົ້ນຄວ້າວິໃຈ ລະດັບຊາດ ແລະ ນາໆຊາດ ທີ່ມີປະສົບການຫລາຍກວ່າ 25 ປີ ແລະ ໄດ້ຮັບ ຫລາຍໆ ລາງວັນ. ທ່ານໄດ້ເຮັດການເຜີຍແຜ່ບົດຄົ້ນວ່ານວນ246 ລະ ບັບ.



ທ່ານ ນາງ. ບຸນຫນັກ ລາດາງາແກ້ວ, ຮອງລັດຖະມົນຕີ, ຮອງຫົວຫນ້າວ່າການຫ້ອງການສໍານັກງານນາຍົກລັດຖະມຸນຕີ

- ທ່ານ ນາງ. ບຸນຫນັກ ລາດາງາແກ້ວ, ຮອງລັດຖະມົນຕີ, ຮອງຫົວຫນ້າວ່າການຫ້ອງການສໍານັກງານ ນາຍົກລັດຖະມຸນຕີ.
- ທ່ານມີປະສົບການເຮັດວຽກໃນກົງຈັກລັດມາຫລາຍ ກວ່າ 40 ປີ. ກ່ອນຫນ້ານີ້ທ່ານໄດ້ເຮັດວຽກເປັນຫົວຫນ້າ ກົມລັດຕັ້ງ ປະຈໍາຫ້ອງການສໍານັກນາຍົກລັດຖະມົນຕີ.
- ທ່ານຈົບລະດັບການສຶກສາໃນລະດັບປະລິນຍາໂທ ດ້ານ ການບໍລິຫານ.



ທ່ານ ພູວົງ ກິດຕະວົງ, ຮອງລັດຖະມົນຕີ, ກະຊວງການເງິນ

- ທ່ານ ພູວົງ ກິດຕິວົງ, ປະຈຸບັນເປັນຮອງ ລັດຖະມົນຕີ ກະຊວງການເງິນ. ທ່ານເຮັດວຽກມາ ຫລາຍກວ່າ 20 ປີ ໃນຫລາຍກົມແລະ ກ່ອນຫນ້ານີ້ ທ່ານເປັນຫົວຫນ້າກົມ ງົບປະມານ .
- ທ່ານເປັນນັກສາດຖະສາດ ເຊິ່ງໄດ້ຮັບປະລິຍາຕີ ດ້ານເສດຖະສາດຈາກມະຫາໄລ ຊຽງໃຫມ່ ປະເທດ ໄທ. ນອກນີ້ ໄດ້ລົບປະລິນຍາໂທດ້ານການເງິນ ແລະ ເສດຖະສາດຈາກວິທະຍາໄລ ດົງຄຳຊ້າງ ສປປ ລາວ ແລະ ຫວຽດນາມ.



ທ່ານ ນາງ ອຳໄພວອນ ລ້ອມບຸນແພງ,
ເລຂາທິການ ສະພາແຫ່ງຊາດ

- ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເຮັດຫນ້າທີ່ ເປັນສະມາຊິກຂອງຄະນະປະຈຳ ສະພາແຫ່ງຊາດ, ເປັນເລຂາທິການສະພາແຫ່ງຊາດ. ລວມທັງ ທ່ານ ເປັນສະມາຊິກສະພາເຂດ 8 ແຂວງຫົວພັນ, ລວມ ທັງເປັນສະມາຊິກສະພາຂັ້ນແຂວງ, ເຂດເມືອງຊຳ ເຫນືອ.

- ທ່ານໄດ້ເປັນສ່ວນນຶ່ງຂອງສະພາແຫ່ງຊາດມາໄດ້ 13 ປີ ນັບຕັ້ງແຕ່ສາພາສະໄຫມ ທີ 7.

- ທ່ານໄດ້ເລີ່ມວຽກຈາກ ຫ້ອງການໄອຍະການ ປະຊາຊົນ ແຂວງ ຫົວພັນ, ເຊິ່ງທ່ານໄດ້ເຮັດວຽກຢູ່ ທີ່ນັ້ນປະມານ 18ປີ ກ່ອນມາຮອດຫນ້າວຽກປະຈຸ ບັນ .

- ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຈົບການສຶກ ສາຊັ້ນສູງດ້ານກົດຫມາຍ, ການບໍລິຫານລັດ ແລະ ການເມືອງ, ຈາກນັ້ນ ຈົບລະດັບປະລິນຍາຕີສາຂາ ກົດຫມາຍ ຈາກມະຫາໄລແຫ່ງຊາດ.



ທ່ານ ສີວິໄລ ແສງຈະເລີນ, ຮອງເຈົ້າແຂວງ, ແຂວງ ຊຽງຂວາງ

- ທ່ານ ສີວິໄລ ແສງຈະເລີນ ເປັນຮອງເຈົ້າແຂວງ ແຂວງຊຽງຂວາງມາຕັ້ງແຕ່ປີ 2020 .
- ກ່ອນທ່ານໄດ້ຮັບຕໍາແຫນ່ງປະຈຸບັນ ທ່ານໄດ້ ເຮັດຫນ້າທີເປັນຫົວຫນ້າພະແນກວິທະຍາສາດ ແລະ ເຕັກໂນໂລຊີ ປະຈໍາແຂວງ, ແລະ ເປັນ ເຈົ້າເມືອງ ເມືອງແປກ .
- ທ່ານ ມີປະສົບການໃນຂະແຫນງສຶກສາຫລາຍ ກວ່າ 20 ປີ ໃນການເປັນຄູສອນ, ຮອງ ຜູ້ອໍານວຍການໂຮງຮຽນມັດທະຍົມໂພນສະຫວັນ , ເປັນທີປຶກສາການອອກຫລັກສູດການຮຽນ ລະດັບມັດທະຍົມ, ເປັນຫົວຫນ້າຂະແຫນງ ສາມັນສຶກສາ ຂອງແຂວງ.
- ລະດັບການສຶກສາ ທ່ານ ສີວິໄລ ໄດ້ຮັບປະລິນຍາ ຕີ ວິຊາເຄມີ ຈາກມະຫາວິທະຍາໄລ ແຫ່ງຊາດ ສປປ ລາວ.